**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ທະນາຄານແຫ່ງ ສປປ ລາວ

ກົມຄຸ້ມຄອງທະນາຄານທຸລະກິດ ເລກທີ: 750/ກຄທ

RECEIVED

ນະຄອນຫຼວງວຽງຈັນ, ວັນທີ: 30 ທັນວາ 2021

04 JAN 2022

# ແຈ້ງການ

RHB Bank Lao Sole Co., Ltd

ເຖິງ: ທ່ານ ຜູ້ອຳນວຍການທະນາຄານທຸລະກິດ ແລະ ຫົວໜ້າສາຂາທະນາຄານທຸລະກິດ

ເລື່ອງ: ການເຜີຍແຜ່ແຈ້ງການຂອງຫ້ອງການ, ທະນາຄານແຫ່ງ ສປປ ລາວ ລົງໃນເວັບໄຊ໌ ຂອງທະນາຄານ.

- ອີງຕາມ ກົດໝາຍວ່າດ້ວຍທະນາຄານທຸລະກິດ ສະບັບເລກທີ 56/ສພຊ, ລົງວັນທີ 07 ທັນວາ 2018.
- ອີງຕາມ ແຈ້ງການຂອງຫ້ອງການ, ທະນາຄານແຫ່ງ ສປປ ລາວ, ສະບັບເລກທີ 233/ຫກ, ລົງວັນທີ 15 ທັນວາ 2021.

ກົມຄຸ້ມຄອງທະນາຄານທຸລະກິດ (ກຄທ) ຂໍແຈ້ງມາຍັງທ່ານ ເພື່ອນຳເອົາແຈ້ງການຂອງຫ້ອງການ, ທະນາຄານແຫ່ງ ສປປ ລາວ ເລື່ອງ: ເພີ່ມທະວີເອົາໃຈໃສ່ຕ້ານການເຮັດທຸລະກຳທາງການເງິນທີ່ບໍ່ຖືກຕ້ອງຕາມກົດໝາຍ ສະບັບເລກທີ 233/ຫກ, ລົງວັນທີ 15 ທັນວາ 2021 ເຜີຍແຜ່ລົງໃນເວັບໄຊ໌ຂອງທະນາຄານຕົນ ເພື່ອເປັນອີກຊ່ອງທາງໜຶ່ງໃນການໂຄສະນາ ແລະ ເຜີຍແຜ່ຄວາມຮູ້ກ່ຽວກັບກົນອຸບາຍທາງດ້ານການເງິນໃຫ້ແກ່ສັງຄົມ ກໍ່ຄືບັນດາລູກຄ້າຂອງທະນາຄານ ໃຫ້ມີສະຕິລະວັງຕົວ, ບໍ່ຕົກເປັນເຫຍື່ອຂອງກຸ່ມຄົນບໍ່ຫວັງດີ ແລະ ບໍ່ຫຼົງເຊື່ອຕໍ່ກົນອຸບາຍທາງດ້ານການເງິນຂອງກຸ່ມຄົນດັ່ງກ່າວ.

ໃຫ້ທະນາຄານເຜີຍແຜ່ແຈ້ງການສະບັບດັ່ງກ່າວລົງໃນເວັບໄຊ໌ຂອງຕົນໃຫ້ສຳເລັດພາຍໃນ 5 ວັນລັດຖະການ ພາຍຫຼັງທີ່ໄດ້ຮັບແຈ້ງການສະບັບນີ້ເປັນຕົ້ນໄປ ແລະ ທ່ານສາມາດດາວໂຫຼດແຈ້ງການສະບັບດັ່ງກ່າວໄດ້ທີ່ເວັບໄຊ໌ຂອງ ທຫລ ທີ່ www.bol.gov.la ຫຼື ສະແກນ QR Code ດ້ານລຸ່ມນີ້.

ດັ່ງນັ້ນ, ຈິ່ງແຈ້ງມາຍັງທ່ານ ເພື່ອຊາບ ແລະ ຈັດຕັ້ງປະຕິບັດ.

**ຫົວໜ້າກົມ**

ສະແກນ QR Code:

ທະນາຄານແຫ່ງ ສ. ປ. ປ. ລາວ

ກົມຄຸ້ມຄອງທະນາຄານທຸລະກິດ

**ອາລຸນ ບຸນຍົງ**

RECEIVED

0 4 JAN 2022

RHB Bank Lao Sole Co., Ltd
- Scan from QR -

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ທະນາຄານແຫ່ງ ສປປ ລາວ

ຫ້ອງການ

ເລກທີ ໒໓໓/ຫກ

ນະຄອນຫຼວງວຽງຈັນ, ວັນທີ 15 ທັນວາ 2021

# ແຈ້ງການ

**ເຖິງ:** ພໍ່ແມ່ ປະຊາຊົນ, ຊາວຄ້າຂາຍ, ພະນັກງານ, ທະຫານ ແລະ ຕຳຫຼວດ ໃນຂອບເຂດທົ່ວປະເທດ.

**ເລື່ອງ:** ເພີ່ມທະວີເອົາໃຈໃສ່ຕ້ານການເຮັດທຸລະກຳທາງການເງິນທີ່ບໍ່ຖືກຕ້ອງຕາມກົດໝາຍ.

- ອີງຕາມ ກົດໝາຍວ່າດ້ວຍທະນາຄານແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ສະບັບເລກທີ 47/ສພຊ, ລົງວັນທີ 19 ມິຖຸນາ 2018.

ຫ້ອງການ, ທະນາຄານແຫ່ງ ສປປ ລາວ (ທຫລ) ຂໍຖືເປັນກຽດແຈ້ງມາຍັງທ່ານຊາບວ່າ: ປະຈຸບັນໄດ້ມີກຸ່ມຄົນຕ່າງປະເທດຈຳນວນໜຶ່ງ ພະຍາຍາມເກ້ຍກ່ອມຊຸກຍູ້ໃຫ້ຄົນລາວຈຳນວນໜຶ່ງ ເພື່ອອ້າງເຕັ້ນເຂົ້າຫາອົງການຈັດຕັ້ງຂັ້ນຕ່າງໆຂອງລັດ ທັງເປັນທາງການ ແລະ ແບບບໍ່ເປັນທາງການ ໃຫ້ຫຼົງເຊື່ອວ່າພວກເຂົາມີແຫຼ່ງທຶນຈຳນວນຫຼວງຫຼາຍ ທີ່ສາມາດນຳເຂົ້າມາພັດທະນາປະເທດຊາດໃນໂຄງການຕ່າງໆ ໂດຍຈະແບ່ງຜົນປະໂຫຍດເປັນເປີເຊັນໃຫ້ກັບຜູ້ທີ່ສາມາດຊຸກຍູ້ໃຫ້ອົງການຈັດຕັ້ງທີ່ກ່ຽວຂ້ອງຂອງລັດເຫັນດີ ແລະ ອະນຸມັດ. ຊຶ່ງຈຸດປະສົງທີ່ແທ້ຈິງຂອງກຸ່ມຄົນຕົວະຕົ້ມເຫຼົ່ານີ້ ແມ່ນເພື່ອຫຼອກລວງເອົາເງິນຂອງຄົນລາວທີ່ເປັນຕົວແທນເຂົ້າມາອ້າງເຕັ້ນນຳກຸ່ມຄົນເຫຼົ່ານີ້. ຊຶ່ງວິທີການແອບອ້າງຂອງກຸ່ມຄົນເຫຼົ່ານີ້ທີ່ກວດພົບ ມີດັ່ງນີ້:

1. ແອບອ້າງໂອນເງິນຜ່ານບັນຊີຂອງ ທຫລ: ອີງຕາມມາດຕາ 10 ຂອງກົດໝາຍວ່າດ້ວຍທະນາຄານແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ສະບັບເລກທີ 47/ສພຊ, ລົງວັນທີ 19 ມິຖຸນາ 2018, ທຫລ ຈະເປີດບັນຊີເງິນຝາກໃຫ້ພຽງແຕ່ລັດຖະບານ, ສະຖາບັນການເງິນ ແລະ ອົງການຈັດຕັ້ງສາກົນ ເທົ່ານັ້ນ. ສະນັ້ນ, ຈະບໍ່ມີການໂອນເງິນຂອງບຸກຄົນ, ນິຕິບຸກຄົນຜ່ານບັນຊີຂອງ ທຫລ ໄດ້. ທຫລ ຈະບໍ່ຮັບພິຈາລະນາຂໍ້ສະເໜີໃດໆທີ່ເຫັນວ່າເຂົ້າຂ່າຍການແອບອ້າງທີ່ລະບຸຂ້າງເທິງ ແລະ ຈະດຳເນີນມາດຕະການຕໍ່ຜູ້ແອບອ້າງດັ່ງກ່າວ ຕາມລະບຽບກົດໝາຍຂອງ ສປປ ລາວ;
2. ການຫຼອກລວງແຫຼ່ງທຶນທີ່ບໍ່ມີຈິງມັກອ້າງເປັນເງິນຂອງມູລະນິທິໃດໜຶ່ງ ທີ່ມີຈຸດປະສົງຊ່ວຍເຫຼືອຜູ້ທຸກຈົນ ຫຼື ພັດທະນາໂຄງການຕ່າງໆຂອງປະເທດທີ່ຍາກຈົນທີ່ຕ້ອງການແຫຼ່ງທຶນເປັນຈຳນວນຫຼາຍ ແຕ່ບໍ່ມີຫຼັກຖານວ່າແຫຼ່ງທຶນດັ່ງກ່າວຝາກຢູ່ນຳທະນາຄານທຸລະກິດ ຫຼື ສະຖາບັນການເງິນທີ່ເປັນທາງການຂອງປະເທດໃດໜຶ່ງ ທີ່ສາມາດຂໍກວດສອບໄດ້ຕາມລະບຽບການຂອງລະບົບທະນາຄານ;
3. ມັກຈະອ້າງມີຈຳນວນເງິນມະຫາສານທີ່ສະໜອງໃຫ້ໄດ້ແບບງ່າຍດາຍ ຊຶ່ງຈະບໍ່ມີດອກເບ້ຍ, ການກວດສອບ ຫຼື ຮຽກຮ້ອງເອົາຫຼັກຊັບຄ້ຳປະກັນຈາກຜູ້ກູ້ຢືມ ຫຼື ຜູ້ຂໍທຶນ;
4. ມັກຈະມີຄ່າທຳນຽມການໂອນເງິນທີ່ຜູ້ກູ້ຢືມ ຫຼື ຜູ້ຂໍທຶນຕ້ອງຈ່າຍລ່ວງໜ້າ;

5. ຜູ້ແອບອ້າງມັກຈະພະຍາຍາມສະແດງຄວາມໜ້າເຊື່ອຖືຂອງຕົນດ້ວຍຫຼາຍວິທີ ເປັນຕົ້ນ: ພົວພັນ ຫຼື ສ້າງຄວາມໃກ້ຊິດກັບຜູ້ມີຊື່ສຽງ ຫຼື ເປັນທີ່ຮູ້ຈັກໃນສັງຄົມ, ອອກສື່ຕ່າງໆ, ມີເອກະສານຕ່າງໆກ່ຽວກັບຜູ້ແອບອ້າງ ແລະ ທຶນທີ່ຈະນໍາເຂົ້າມາ (ສ່ວນໃຫຍ່ແມ່ນສ້າງຂຶ້ນເອງ ແລະ ບໍ່ສາມາດກວດສອບຄວາມເປັນຈິງໄດ້);
6. ມັກຈະເຮັດເປັນຂະບວນແບບຂ້າມປະເທດ ໂດຍມີການວາງແຜນລະອຽດຮອບຄອບເພື່ອໃຫ້ທ່ານ (ໂດຍສະເພາະນັກທຸລະກິດທີ່ກໍາລັງຕ້ອງການເງິນລົງທຶນກ້ອນໃຫຍ່) ຫຼົງເຊື່ອ;
7. ມັກຈະບໍ່ໃຫ້ທີ່ປຶກສາທາງກົດໝາຍເຂົ້າມາຫຍຸ້ງກ່ຽວໃນການເຮັດທຸລະກໍາ;
8. ໃນກໍລະນີກົນລວງແບບຕ່ອງໂສ້ ຫຼື Ponzi scheme, ມັກຈະອ້າງຜົນຕອບແທນສູງຂອງການລົງທຶນໂດຍມີສິ່ງຈູງໃຈໃຫ້ສະມາຊິກດຶງສະມາຊິກເຂົ້າຮ່ວມຫຼາຍໆ ໂດຍທີ່ບໍ່ມີການດໍາເນີນທຸລະກິດ ທີ່ສະທ້ອນໃຫ້ເຫັນຄວາມສາມາດໃນການແບ່ງປັນຜົນຕອບແທນດັ່ງກ່າວ;
9. ໃນກໍລະນີມີກົນລວງການຊື້ຂາຍ, ມັກຈະມີການຊື້ແພງມາຂາຍຖືກໃຫ້ ໂດຍມີການຈ່າຍເງິນລ່ວງໜ້າຜ່ານສະມາຊິກໃນຄອບຄົວ ຫຼື ຄົນຮັກແພງກັນ, ເມື່ອມີຜູ້ຫຼົງເຊື່ອ ແລະ ສັ່ງຊື້ຈໍານວນຫຼາຍ ຜູ້ຂາຍຈະນໍາເອົາເງິນ ແລະ ຕົວຫຼົບໜີ ຫຼື ມີຂໍ້ອ້າງຕ່າງໆ ທີ່ສົ່ງຜົນໃຫ້ຜູ້ຫຼົງເຊື່ອ ແລະ ສັ່ງຊື້ ບໍ່ໄດ້ຮັບສິນຄ້າ, ການບໍລິການ ຫຼື ສູນເສຍທາງການເງິນ.

ນອກຈາກນັ້ນ, ຍັງມີກົນລວງຕ່າງໆ ທີ່ປັບປ່ຽນຮູບແບບ ແລະ ຊ່ອງທາງ ເພື່ອຫຼອກລວງເອົາເງິນຄໍາຂອງທ່ານ ໂດຍສະເພາະໃນສະພາບເສດຖະກິດຫຍຸ້ງຍາກໃນປະຈຸບັນ ທັງພາຍໃນ ແລະ ສາກົນ ບວກກັບຄວາມກ້າວໜ້າທາງດ້ານເຕັກໂນໂລຊີທີ່ອາດຖືກສວຍໃຊ້ເພື່ອໃຫ້ກົນລວງມີຄວາມໜ້າເຊື່ອຖື. ກໍລະນີພົບເຫັນການແອບອ້າງ ຫຼື ເຂົ້າຂ່າຍການຫຼອກລວງ ສາມາດແຈ້ງມາໄດ້ທີ່ ທະນາຄານແຫ່ງ ສປປ ລາວ, ເບີໂທ: 021 213109

ດັ່ງນັ້ນ, ຈຶ່ງແຈ້ງມາຍັງບັນດາທ່ານເພື່ອຊາບ ແລະ ມີສະຕິລະວັງຕົວເພື່ອບໍ່ໃຫ້ຕົກເປັນເຫຍື່ອຂອງກຸ່ມຄົນບໍ່ຫວັງດີ, ບໍ່ຫຼົງເຊື່ອຕໍ່ການເຜີຍແຜ່ກົນອຸບາຍດັ່ງກ່າວ.

**ຫົວໜ້າຫ້ອງການ**

ທະນາຄານແຫ່ງ ສປປ ລາວ ຫ້ອງການ

**ເພັດສະກຸາພອນ ແກ້ວວົງວິຈິດ**